ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 1910 /ທຄຕລ 2026
ນະຄອນຫຼວງວຽງຈັນ, ວັນທີ: 02 JUN 2026

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ຄັດເລືອກບໍລິສັດ ຮັບເໝົາບໍລິການ MA Software Huawei DCS ແລະ eDME ປະຈຳປີ 2026.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນ, ເຂົ້າຮ່ວມປະມູນລາຄາບຳລຸງຮັກສາ MA Software Huawei DCS ແລະ eDME ປະຈຳປີ 2026, ເພື່ອມານຳໃຊ້ເຂົ້າໃນວຽກງານ ຂອງ ທະນາຄານ ສະນັ້ນ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ/ດ | ລາຍການ | ຈຳນວນ | ວັນທີໝົດMA | ວັນທີຕ້ອງການເລີ່ມ MA ໃໝ່ |
|---|---|---|---|---|
| 1 | eDME ລະບົບບໍລິຫານຈັດການ DCS Datacenter<br>Part Number: 88037QWC<br>Model: LICDMEDATA21<br>ID: 2409-03HW-UJ65 | 52 | 07/08/2026 | 08/08/2026 – 07/08/2027 |
| 2 | DCS ເປັນ VM Platform<br>Part Number: 88037QWC<br>Model: LICDMEDATA21<br>ID: 2409-03HW-UQ87 | 40 | 07/08/2026 | 08/08/2026 – 07/08/2027 |

- ເງື່ອນໄຂໜ້າວຽກໃນການບຳລຸງຮັກສາ MA License ຂອງ Software Huawei eDME ແລະ DCS ມີດັ່ງນີ້:

1. ບໍລິສັດທີ່ເຂົ້າຮ່ວມການປະມູນ ຕ້ອງເປັນບໍລິສັດທີ່ເປັນ Partner ກັບບໍລິສັດ Huawei ຫລື ຕ້ອງມີໃບຢັ້ງຢືນການເປັນຕົວແທນຈາກບໍລິສັດ Huawei ເພື່ອຮັບປະກັນໃນການແກ້ໄຂບັນຫາ ແລະ Support ໄດ້ທັນເວລາ.
2. ຕ້ອງໃຫ້ ທຄຕລ ສາມາດເປີດ case online ກັບ Huawei ໄດ້ໂດຍກົງ
3. ໃນກໍລະນີມີບັນຫາເກີດຂຶ້ນ ບໍລິສັດຕ້ອງມີສ່ວນຮ່ວມໃນການກວດກາ ແລະ ວິເຄາະບັນຫາຮ່ວມກັບ ທຄຕລ.
4. ມີການຕິດຕາມ ແລະ ໃຫ້ຄຳແນະນຳ ກັບ ທຄຕລ ເປັນປະຈຳ

- ເງື່ອນໄຂຂອງບໍລິສັດຫ້າງຮ້ານຕົວແທນຈຳໜ່າຍອຸປະກອນດັ່ງກ່າວມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:

❖ <u>ເອກະສານ ຊອງທີ 1:</u>

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດຢ່າງໜ້ອຍ 02 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2022-2025 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ.
2. ເອກະສານລາຍລະອຽດສະເປັກໜ້າວຽກ, ການຮັບປະກັນ, ໄລຍະເວລາການຈັດສົ່ງ License ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ **ວັນ ສຸກ ວັນທີ 12/06/2026 ເວລາ 11:00 ໂມງ** ໂດຍການສົ່ງ ສົ່ງຟາຍເຂົ້າ E-mail: procurement@bcel.com.la ແລະ inspect-it@bcel.com.la.

❖ <u>ເອກະສານ ຊອງທີ 2:</u> (ປິດຊອງ)

1. ໃບສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10%, ໃບສະເໜີລາຄາຂອງຜູ້ສະໜອງມີອາຍຸຢ່າງໜ້ອຍ 01 ເດືອນ ຫລັງຈາກມື້ຍື່ນຊອງປະມູນ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍ ທຄຕລ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 23/09/2026)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນ ອັງຄານ **ວັນທີ 23/06/2026 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

- <u>**ໝາຍເຫດ:**</u>

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫລາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ການຊຳລະແມ່ນຊຳລະ 100% ຂອງມູນຄ່າ ພາຍໃນ 25 ວັນ ພາຍຫຼັງຕິດຕັ້ງສຳເລັດ ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ແຫ່ງ ສປປ ລາວ ນະຄອນ ວຽງຈັນ ຫລວງ

ນ. ສາຍສະໝອນ ຈັນທະຈັກ

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............./ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (Server ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (ເລກທີ/ລົງວັນທີ) | (ເລກທີ/ລົງວັນທີ) | (ເລກທີ/ລົງວັນທີ) | .... ປີ | (ໃຫ້ລະບຸ) | | | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ.......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: